**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງພາຍໃນ** **ເລກທີ 02 /ພນ**

ນະຄອນຫລວງວຽງຈັນ, ວັນທີ 27 ເມສາ 2012

# ຄໍາແນະນໍາ
## ກ່ຽວກັບການຈັດຕັ້ງປະຕິບັດດໍາລັດວ່າດ້ວຍມູນນິທິ

ຄໍາແນະນໍາສະບັບນີ້ ຜັນຂະຫຍາຍ, ແນະນໍາປະຕິບັດເນື້ອໃນບາງມາດຕາຂອງດໍາລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011 (ເອີ້ນຫຍໍ້ວ່າດໍາລັດ) ແນໃສ່ຮັບປະກັນການຈັດຕັ້ງປະຕິບັດຕົວຈິງມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງໃນຂອບເຂດທົ່ວປະເທດ.

### I. ອະທິບາຍຄໍາສັບ

ບາງຄໍາສັບ ແລະ ບາງປະໂຫຍກ ໃນດໍາລັດມີຄວາມໝາຍດັ່ງລຸ່ມນີ້:

1. ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ໝາຍເຖິງກະຊວງພາຍໃນ.
2. ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງໝາຍເຖິງກະຊວງພາຍໃນ, ອົງການປົກຄອງແຂວງ ຫຼື ນະຄອນ.
3. ຊື່ ປະທານຄະນະບໍລິຫານງານ ຫຼື ປະທານສະພາບໍລິຫານງານ ທີ່ກໍານົດຢູ່ໃນມາດຕາ 20 ສາມາດເອີ້ນວ່າ ປະທານມູນນິທິ ກໍໄດ້.

### II. ກ່ຽວກັບການຮັບບໍລິຈາກທຶນ, ຊັບສິນ ແລະ ການຕັ້ງຕູ້ຮັບບໍລິຈາກທຶນ, ຊັບສິນ

1. ການຮັບບໍລິຈາກ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆພາຍໃນປະເທດ: ມູນນິທິ ສາມາດຮັບເອົາການບໍລິຈາກທຶນ, ຊັບສິນໄດ້ ໂດຍບໍ່ຕ້ອງຂໍອະນຸຍາດຈາກອົງການຈັດຕັ້ງລັດ ທີ່ມີສິດອະນຸມັດສ້າງຕັ້ງ, ແຕ່ການຮັບບໍລິຈາກໃດທີ່ມີມູນຄ່າແຕ່ ຫ້າສິບລ້ານກີບຂຶ້ນເມືອ ພາຍຫລັງຮັບເອົາເປັນທີ່ຮຽບຮ້ອຍແລ້ວໃຫ້ລາຍງານເປັນລາຍລັກອັກສອນໄປຍັງກະຊວງການເງິນ ຫຼື ພະແນກການເງິນຂັ້ນແຂວງ ແລະ ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງມູນນິທິ ພາຍໃນກໍານົດຢ່າງຊ້າ 7 ວັນ.
2. ການຮັບບໍລິຈາກ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງຕ່າງປະເທດ: ມູນນິທິ ສາມາດຮັບເອົາການບໍລິຈາກທຶນ, ຊັບສິນທີ່ມີມູນຄ່າຕໍ່າກວ່າ ໜຶ່ງຮ້ອຍລ້ານກີບລົງມາ ໂດຍບໍ່ຕ້ອງຂໍອະນຸຍາດຈາກອົງການຈັດຕັ້ງໃດຂອງລັດ, ແຕ່ຖ້າຫາກມີມູນຄ່າ ແຕ່ໜຶ່ງຮ້ອຍລ້ານກີບຂຶ້ນໄປ ໃຫ້ຂໍອະນຸຍາດກ່ອນດັ່ງນີ້:

– ມູນນິທິ ທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດໃຫ້ຂໍອະນຸຍາດຈາກກະຊວງການຕ່າງປະເທດ ໂດຍມີຄໍາເຫັນຢັ້ງຢືນຖານະມູນນິທິຈາກກະຊວງພາຍໃນ. ພາຍຫຼັງສໍາເລັດການຮັບບໍລິຈາກ ໃນແຕ່ລະຄັ້ງ ໃຫ້ລາຍງານກະຊວງການເງິນ ແລະ ກະຊວງພາຍໃນ ຢ່າງເປັນລາຍລັກອັກສອນ ພາຍໃນ 7 ວັນ.
– ມູນນິທິ ທີ່ເຄື່ອນໄຫວໃນຂອບເຂດພາຍໃນແຂວງ ຫຼື ນະຄອນ, ເມືອງ ຫຼື ເທດສະບານ ໃຫ້ຂໍອະນຸຍາດຈາກພະແນກພົວພັນຕ່າງປະເທດແຂວງ, ນະຄອນຫລວງ ໂດຍມີຄໍາເຫັນຢັ້ງຢືນຖານະມູນນິທິຈາກພະແນກພາຍໃນແຂວງ, ນະຄອນຫລວງ. ພາຍຫຼັງສໍາເລັດການຮັບບໍລິຈາກໃນແຕ່ລະຄັ້ງ ໃຫ້ລາຍງານພະແນກການເງິນ, ພະແນກພົວພັນຕ່າງປະເທດ ແລະ ພະແນກພາຍໃນແຂວງ, ນະຄອນຫລວງ ພາຍໃນກໍານົດຢ່າງຊ້າ 7 ວັນ.

3. ການຕັ້ງຕູ້ຮັບບໍລິຈາກທຶນ, ຊັບສິນ: ມູນນິທິ ສາມາດຕິດຕັ້ງຕູ້ຮັບບໍລິຈາກທຶນ, ຊັບສິນໃນສະຖານທີ່ຕ່າງໆໄດ້ ຕາມກໍານົດໃນກົດລະບຽບຂອງມູນນິທິ ແລະ ບົນພື້ນຖານການເຫັນດີຂອງເຈົ້າຂອງສະຖານທີ່.

## III. ກ່ຽວກັບການລະດົມທຶນ

ມູນນິທິ ສາມາດປຸກລະດົມຂົນຂວາຍທຶນ, ຊັບສິນ ເຂົ້າມູນນິທິດ້ວຍຮູບການຈັດເວທີ, ຈັດກອງປະຊຸມ ຫຼື ຈັດງານຕ່າງໆ ເພື່ອຮຽກຮ້ອງໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງສະໝັກໃຈມາບໍລິຈາກ, ສະໜັບສະໜູນທຶນ ແລະ ຊັບສິນ ແກ່ມູນນິທິ ໂດຍປະຕິບັດຕາມຂັ້ນຕອນດັ່ງນີ້:

1. ເຮັດໜັງສືສະເໜີຜ່ານພະແນກພາຍໃນແຂວງ, ນະຄອນຫລວງ ເພື່ອຂໍອະນຸຍາດຈາກເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫລວງ ບ່ອນທີ່ຈະໃຊ້ເປັນສະຖານທີ່ຈັດການລະດົມທຶນ. ໃນໜັງສືສະເໜີຕ້ອງລະບຸແຈ້ງຈຸດປະສົງ, ເນື້ອໃນ, ວັນ, ເວລາ, ສະຖານທີ່ ແລະ ວິທີການປຸກລະດົມທຶນ ພ້ອມກັນນັ້ນກໍ່ຕ້ອງຮັບປະກັນຄວາມສະຫງົບເປັນລະບຽບຮຽບຮ້ອຍໃນງານ.
2. ພາຍຫຼັງສໍາເລັດການລະດົມທຶນແຕ່ລະຄັ້ງ, ມູນນິທິ ລາຍງານມາຍັງອົງການທີ່ອະນຸມັດສ້າງຕັ້ງ ພາຍໃນ 7 ວັນ.

   ທຶນ ແລະ ຊັບສິນ ທີ່ໄດ້ມາຈາກການປຸກລະດົມຂົນຂວາຍ ພາຍຫຼັງຫັກຄ່າໃຊ້ຈ່າຍ ສິ້ນເປືອງອອກແລ້ວ ຕ້ອງນໍາໃຊ້ເຂົ້າໃນຈຸດປະສົງທີ່ໄດ້ກໍານົດໄວ້ເທົ່ານັ້ນ. ໃນກໍລະນີການລະດົມທຶນ ທີ່ມີຈຸດປະສົງສະເພາະກິດໃດໜຶ່ງ ເງິນ ແລະ ຊັບສິນທັງໝົດທີ່ໄດ້ມາຈາກການປຸກລະດົມຂົນຂວາຍນັ້ນໃຫ້ນໍາໃຊ້ເຂົ້າໃນຈຸດປະສົງສະເພາະກິດຂອງມູນນິທິເທົ່ານັ້ນເຊັ່ນ: ອຸທົກກະໄພ, ວາຕະໄພ, ອັກຄີໄພ, ໂລກລະບາດ, ໄພອຶດຫິວເປັນຕົ້ນ.

## IV. ກ່ຽວກັບທຶນ ແລະ ຊັບສິນທີ່ຕ້ອງມີໃນເບື້ອງຕົ້ນ ເພື່ອສ້າງຕັ້ງມູນນິທິ

ຜູ້ລິເລີ່ມ ຫລື ຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິ ຕ້ອງມີທຶນ ແລະ ຊັບສິນ ທີ່ຈໍາເປັນໃນເບື້ອງຕົ້ນ ໃນຈໍານວນທີ່ເໝາະສົມ ເພື່ອຮັບປະກັນການເຄື່ອນໄຫວວຽກງານຢ່າງເປັນປົກກະຕິ ເປັນປະຈໍາ ແລະ ສາມາດປະຕິບັດຈຸດປະສົງທີ່ກໍານົດໄວ້ໃນກົດລະບຽບຂອງຕົນ.

## V. ໂຄງປະກອບບຸກຄະລາກອນຂອງມູນນິທິ

ມູນນິທິທີ່ເປັນຂອງບຸກຄົນ, ການຈັດຕັ້ງ ຫລື ນິຕິບຸກຄົນຂອງລາວ: ຄະນະບໍລິຫານງານ, ປະທານ, ຮອງປະທານ, ຄະນະກວດກາ, ຜູ້ອຳນວຍການ ແລະ ເລຂາທິການ ຂອງມູນນິທິ ຕ້ອງເປັນພົນລະເມືອງລາວ ແລະ ບໍ່ເປັນບ້າເສຍຈິດ.

ຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ເຄື່ອນໄຫວວຽກງານ ຫລື ປະກອບອາຊີບຢູ່ໃນ ສປປ ລາວ, ໄດ້ປະກອບທຶນ ຫຼື ຊັບສິນເພື່ອສ້າງຕັ້ງມູນນິທິຮ່ວມກັບການຈັດຕັ້ງ ຫຼື ພົນລະເມືອງລາວແລ້ວນັ້ນ ສາມາດເປັນປະທານກິດຕິມະສັກ ຫຼື ທີ່ປຶກສາໃຫ້ແກ່ມູນນິທິໄດ້.

## VI. ກ່ຽວກັບຂັ້ນຕອນການສ້າງຕັ້ງມູນນິທິ

ລະບຽບ ແລະ ຂັ້ນຕອນການສະເໜີຂໍສ້າງຕັ້ງມູນນິທິທີ່ກຳນົດໃນມາດຕາ 12 ຂອງດຳລັດນັ້ນ ລາຍລະອຽດໃຫ້ປະຕິບັດດັ່ງນີ້:

### ກ. ສຳລັບມູນນິທິ ທີ່ເຄື່ອນໄຫວຂອບເຂດທົ່ວປະເທດ

**ຂັ້ນຕອນທີ 1**:

ຜູ້ລິເລີ່ມກໍ່ຕັ້ງ ຫຼື ຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິ ປະກອບສຳນວນເອກະສານຂໍສ້າງຕັ້ງມູນນິທິ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດຢູ່ໃນມາດຕາ 13 ຂອງດຳລັດວ່າດ້ວຍມູນນິທິແລ້ວ ຍື່ນສະເໜີຕໍ່ ລັດຖະມົນຕີວ່າການກະຊວງພາຍໃນ ເພື່ອພິຈາລະນາ.

**ຂັ້ນຕອນທີ 2**:

ກະຊວງພາຍໃນເມື່ອໄດ້ຮັບສຳນວນເອກະສານຂໍສ້າງຕັ້ງມູນນິທິແລ້ວ, ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ. ກໍລະນີເອກະສານປະກອບຖືກຕ້ອງ, ຄົບຖ້ວນໝົດແລ້ວ, ກະຊວງພາຍໃນ ຕ້ອງສົ່ງສຳນວນເອກະສານທີ່ຈຳເປັນໄປຍັງກະຊວງປ້ອງກັນຄວາມສະຫງົບ, ກະຊວງ ຫຼື ອົງການອື່ນໆທີ່ກ່ຽວຂ້ອງກັບຂົງເຂດການເຄື່ອນໄຫວຂອງມູນນິທິ ເພື່ອຂໍຄຳເຫັນຊ້າສຸດບໍ່ເກີນ 5 ວັນ. ກໍລະນີເອກະສານປະກອບຍັງບໍ່ທັນຖືກຕ້ອງ, ຄົບຖ້ວນຕາມກຳນົດ ກະຊວງພາຍໃນຕ້ອງສົ່ງຄືນໃຫ້ຜູ້ລິເລີ່ມ ຫລື ຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິ ພາຍໃນ 3 ວັນເພື່ອນຳໄປປະກອບຄືນໃໝ່ ພ້ອມທັງແນະນຳລະອຽດຈະແຈ້ງຈຸດທີ່ຈະຕ້ອງປັບປຸງແກ້ໄຂ.

**ຂັ້ນຕອນທີ 3**:

ກະຊວງປ້ອງກັນຄວາມສະຫງົບ, ກະຊວງ ຫຼື ອົງການຕ່າງໆ ທີ່ກ່ຽວຂ້ອງກັບຂົງເຂດການເຄື່ອນໄຫວຂອງມູນນິທິ ເມື່ອໄດ້ຮັບໜັງສືສະເໜີ ແລະ ສຳນວນເອກະສານ ຈາກກະຊວງພາຍໃນແລ້ວ ຕ້ອງມີຄຳເຫັນຕອບຄືນພາຍໃນ 40 ວັນ (ຖ້າກາຍກຳນົດເວລາດັ່ງກ່າວຖືວ່າ ກະຊວງປ້ອງກັນຄວາມສະຫງົບ, ກະຊວງ ຫລື ອົງການທີ່ກ່ຽວຂ້ອງໄດ້ເຫັນດີໃນການອະນຸມັດສ້າງຕັ້ງມູນນິທິ).

**ຂັ້ນຕອນທີ 4**:

ຫຼັງຈາກ ໄດ້ຮັບຄຳເຫັນຈາກກະຊວງປ້ອງກັນຄວາມສະຫງົບ, ກະຊວງ ຫລື ອົງການທີ່ກ່ຽວຂ້ອງແລ້ວ, ກະຊວງພາຍໃນຕ້ອງພິຈາລະນາອະນຸມັດ ຫຼື ປະຕິເສດການສ້າງຕັ້ງມູນນິທິພາຍໃນ 15 ວັນ.

**ຂ. ສຳລັບມູນນິທິທີ່ເຄື່ອນໄຫວ ຂອບເຂດພາຍໃນແຂວງ, ນະຄອນຫລວງ, ເມືອງ ຫຼື ເທດສະບານ.**

**ຂັ້ນຕອນທີ 1:**

ຜູ້ລິເລີ່ມກໍ່ຕັ້ງ ຫຼື ຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິກະກຽມ ແລະ ປະກອບສຳນວນເອກະສານຂໍສ້າງຕັ້ງມູນນິທິ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດຢູ່ໃນມາດຕາ 13 ຂອງດຳລັດແລ້ວ ຍື່ນຜ່ານພະແນກພາຍໃນເພື່ອສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫລວງພິຈາລະນາ.

**ຂັ້ນຕອນທີ 2:**

ພະແນກພາຍໃນແຂວງ, ນະຄອນຫລວງ ເມື່ອໄດ້ຮັບສຳນວນເອກະສານຂໍສ້າງຕັ້ງມູນນິທິແລ້ວ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ. ກໍລະນີເອກະສານປະກອບຖືກຕ້ອງ, ຄົບຖ້ວນໝົດແລ້ວ, ພະແນກພາຍໃນຕ້ອງສົ່ງສຳນວນເອກະສານທີ່ຈຳເປັນໄປຍັງກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ ຫຼື ອົງການອື່ນໆທີ່ກ່ຽວຂ້ອງກັບຂົງເຂດການເຄື່ອນໄຫວຂອງມູນນິທິ ເພື່ອຂໍຄຳເຫັນຊ້າສຸດບໍ່ເກີນ 5 ວັນ. ກໍລະນີເອກະສານປະກອບຍັງບໍ່ທັນຖືກຕ້ອງ, ຄົບຖ້ວນຕາມກຳນົດ ພະແນກພາຍໃນຕ້ອງສົ່ງຄືນໃຫ້ຜູ້ລິເລີ່ມ ຫລື ຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິ ພາຍໃນ 3 ວັນເພື່ອນຳໄປປະກອບຄືນໃໝ່ ພ້ອມທັງແນະນຳລະອຽດຈະແຈ້ງຈຸດທີ່ຈະຕ້ອງປັບປຸງແກ້ໄຂ.

**ຂັ້ນຕອນທີ 3:**

ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ ຫລື ອົງການທີ່ກ່ຽວຂ້ອງກັບຂົງເຂດການເຄື່ອນໄຫວຂອງມູນນິທິ ເມື່ອໄດ້ຮັບໜັງສືສະເໜີ ແລະ ສຳນວນເອກະສານຈາກພະແນກພາຍໃນແລ້ວ ຕ້ອງມີຄຳເຫັນຕອບຄືນ ພາຍໃນ 40 ວັນ (ຖ້າກາຍກຳນົດເວລາດັ່ງກ່າວຖືວ່າ ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ ຫລື ອົງການທີ່ກ່ຽວຂ້ອງໄດ້ເຫັນດີໃນການອະນຸມັດສ້າງຕັ້ງມູນນິທິ).

**ຂັ້ນຕອນທີ 4:**

ຫຼັງຈາກ ໄດ້ຮັບຄຳເຫັນຈາກກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ ຫລື ອົງການທີ່ກ່ຽວຂ້ອງແລ້ວ, ພະແນກພາຍໃນແຂວງ, ນະຄອນຫລວງ ຕ້ອງສະເໜີເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫລວງ ພິຈາລະນາອະນຸມັດ ຫຼື ປະຕິເສດການສ້າງຕັ້ງມູນນິທິ ພາຍໃນ 15 ວັນ.

## VII. ກ່ຽວກັບການໂຮມ, ການແຍກ ແລະ ການຍຸບເລີກມູນນິທິ

### 1. ການໂຮມ:

ການໂຮມສອງມູນນິທິ ຫລື ຫລາຍກ່ວາສອງມູນນິທິເຂົ້າກັນເປັນມູນນິທິດຽວ ຕາມທີ່ກຳນົດໃນມາດຕາ 31 ຂອງດຳລັດ ລະອຽດໃຫ້ປະຕິບັດດັ່ງນີ້:

ມູນນິທິ ເມື່ອມີຈຸດປະສົງຢາກໂຮມເຂົ້າກັນໃຫ້ຄະນະບໍລິຫານງານຂອງແຕ່ລະມູນນິທິປຶກສາຫາລື ແລະ ເປັນເອກະພາບກັນ, ຫລັງຈາກນັ້ນໃຫ້ປະກອບເອກະສານຄົບຖ້ວນດັ່ງລຸ່ມນີ້ເພື່ອສະເໜີອົງການທີ່ມີສິດອະນຸມັດສ້າງຕັ້ງມູນນິທິພິຈາລະນາ:

1) ໃບຄຳຮ້ອງຂໍໂຮມມູນນິທິ.
2) ບົດອະທິບາຍເຫດຜົນການໂຮມ.
3) ສຳເນົາກົດລະບຽບສະບັບກຳລັງໃຊ້ຢູ່ຂອງແຕ່ລະມູນນິທິ (ຖ້າມີການປ່ຽນແປງໃຫ້ຄັດຕິດມາພ້ອມບົດອະທິບາຍເຫດຜົນ ແລະ ການສັງລວມການສົມທຽບຄວາມແຕກຕ່າງກັນລະຫວ່າງກົດລະບຽບສະບັບເກົ່າ ແລະ ສະບັບໃໝ່).
4) ບັນຊີລາຍຊື່ຄະນະບໍລິຫານ ຫລື ສະພາບໍລິຫານຂອງມູນນິທິຊຸດໃໝ່ (ຄາດຄະເນ).
5) ຊີວະປະຫວັດຫຍໍ້ຂອງຜູ້ທີ່ຄາດວ່າຈະເປັນຄະນະບໍລິຫານ ຫລື ສະພາບໍລິຫານຊຸດໃໝ່ ຜ່ານມາຍັງບໍ່ເຄີຍໄດ້ແຈ້ງ.
6) ບົດບັນທຶກກອງປະຊຸມຂອງຄະນະບໍລິຫານງານ ຫລື ສະພາບໍລິຫານມູນນິທິກ່ຽວກັບການຕົກລົງເຫັນດີໂຮມ.
7) ບັນຊີຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ແຜນການຊຳລະໜີ້ສິນຂອງແຕ່ລະມູນນິທິ.
8) ເອກະສານຢັ້ງຢືນສຳນັກງານຂອງມູນນິທິໃໝ່.

ເມື່ອໄດ້ຮັບສຳນວນເອກະສານສະເໜີຂໍໂຮມມູນນິທິຢ່າງຖືກຕ້ອງ ຄົບຖ້ວນໝົດແລ້ວ, ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງມູນນິທິ ຕ້ອງພິຈາລະນາຮັບຮອງ ຫຼື ປະຕິເສດການໂຮມພາຍໃນ 15 ວັນ.

ໃນກໍລະນີການໂຮມມູນນິທິ ພາໃຫ້ມີການປ່ຽນແປງກົດລະບຽບ ແລະ ບຸກຄະລາກອນຄະນະບໍລິຫານງານຂອງມູນນິທິ, ມູນນິທິຕ້ອງລາຍງານ ອະທິບາຍເຫດຜົນຂອງຈຸດທີ່ມີການປ່ຽນແປງ ແລະ ຕ້ອງສົ່ງຊີວະປະຫວັດຫຍໍ້ຂອງຜູ້ທີ່ຈະເປັນຄະນະບໍລິຫານງານມູນນິທິຊຸດໃໝ່ແຕ່ຜ່ານມາຍັງບໍ່ເຄີຍສົ່ງມາກ່ອນ ມາໃຫ້ອົງການທີ່ມີສິດອະນຸມັດສ້າງຕັ້ງພິຈາລະນາ.

## 2. ການແຍກ

ການແຍກມູນນິທິໜຶ່ງອອກເປັນສອງ ຫລື ຫລາຍກ່ວາສອງມູນນິທິຕາມທີ່ກຳນົດໃນມາດຕາ 31 ຂອງດຳລັດ ໃຫ້ປະຕິບັດດັ່ງນີ້:

ຄະນະບໍລິຫານງານມູນນິທິ ປະກອບເອກະສານດັ່ງລຸ່ມນີ້ໃຫ້ຖືກຕ້ອງຄົບຖ້ວນແລ້ວຍື່ນສະເໜີຕໍ່ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງ ເພື່ອພິຈາລະນາ:

1. ໃບຄຳຮ້ອງຂໍແຍກ.
2. ບົດອະທິບາຍເຫດຜົນໃນການແຍກ.
3. ຮ່າງກົດລະບຽບຂອງມູນນິທິໃໝ່.
4. ມະຕິຕົກລົງກອງປະຊຸມຄະນະບໍລິຫານງານມູນນິທິກ່ຽວກັບການແຍກ.
5. ບັນຊີຊັບສິນ (ລາຍຮັບ, ລາຍຈ່າຍ) ແລະ ແຜນການຊຳລະໜີ້ສິນຂອງມູນນິທິ (ຖ້າມີ).
6. ຊີວະປະຫວັດຫຍໍ້, ໃບຢັ້ງຢືນທີ່ຢູ່, ໃບແຈ້ງໂທດ, ສຳເນົາປຶ້ມສຳມະໂນຄົວ ແລະ ບັດປະຈຳຕົວ ຂອງຜູ້ທີ່ຈະມາເປັນຄະນະບໍລິຫານງານຊຸດໃໝ່ (ກໍລະນີມີການປ່ຽນແປງ).

7. ເອກະສານຢັ້ງຢືນສຳນັກງານແຫ່ງໃໝ່ (ຖ້າມີການປ່ຽນແປງ).

ເມື່ອໄດ້ຮັບສຳນວນເອກະສານສະເໜີຂໍໂຮມມູນນິທິຢ່າງຖືກຕ້ອງຄົບຖ້ວນໝົດແລ້ວ ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງມູນນິທິ ຕ້ອງພິຈາລະນາຮັບຮອງ ຫຼື ປະຕິເສດການແຍກ ພາຍໃນ 15 ວັນ.

**3. ການຍຸບເລີກ**

ການຍຸບເລີກມູນນິທິ ດ້ວຍຄວາມສະໝັກໃຈແມ່ນກໍລະນີມູນນິທິໄດ້ໝົດກຳນົດເວລາ ຫລື ໄດ້ບັນລຸຈຸດປະສົງຄາດໝາຍວາງໄວ້ແລ້ວທຸກປະການແລ້ວ ຫລື ມູນນິທິບໍ່ມີທຶນເຄື່ອນໄຫວອີກຕໍ່ໄປ.

ເມື່ອມູນນິທິສະໝັກໃຈຂໍຍຸບເລີກ ຄະນະບໍລິຫານງານມູນນິທິ ຕ້ອງກະກຽມເອກະສານດັ່ງລຸ່ມນີ້ໃຫ້ຖືກຕ້ອງຄົບຖ້ວນແລ້ວ ຍື່ນຕໍ່ອົງການຈັດຕັ້ງລັດທີ່ສິດອະນຸມັດສ້າງຕັ້ງພິຈາລະນາ:

1. ໃບຄຳຮ້ອງຂໍຍຸບເລີກມູນນິທິ.
2. ມະຕິຕົກລົງຂອງກອງປະຊຸມຄະນະບໍລິຫານງານມູນນິທິ ທີ່ເຫັນດີໃຫ້ຍຸບເລີກ.
3. ບົດອະທິບາຍເຫດຜົນໃນການຍຸບເລີກ.
4. ບົດສະຫຼຸບບັນຊີຊັບສິນ (ລາຍຮັບ-ລາຍຈ່າຍ), ແຜນການຊຳລະໜີ້ສິນ ແລະ ມອບໂອນຊັບສິນທີ່ຍັງເຫຼືອຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ.
5. ຕາປະທັບ ແລະ ໃບທະບຽນນຳໃຊ້ຕາປະທັບ.
6. ຂໍ້ຕົກລົງອະນຸມັດສ້າງຕັ້ງມູນນິທິ (ສະບັບຕົ້ນ).

ພາຍຫຼັງໄດ້ຮັບສຳນວນເອກະສານ ສະເໜີຂໍຍຸບເລີກມູນນິທິ ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງພິຈາລະນາໃຫ້ຍຸບເລີກ ຫລື ປະຕິເສດພາຍໃນ 15 ວັນ.

ກະຊວງພາຍໃນ, ແຂວງ, ນະຄອນຫລວງ ອອກແຈ້ງການກ່ຽວກັບການຍຸບເລີກມູນນິທິໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລະ ສັງຄົມຮັບຊາບ.

## VIII. ກ່ຽວກັບການຮັບຮອງຄະນະບໍລິຫານງານ ແລະ ການປ່ຽນແປງທີ່ຕັ້ງສຳນັກງານມູນນິທິ

- ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງມູນນິທິ ເປັນຜູ້ຮັບຮອງເອົາຄະນະບໍລິຫານງານມູນນິທິ.
- ເມື່ອມີການປ່ຽນແປງຄະນະບໍລິຫານງານທັງໝົດຄະນະ ຫຼື ຈຳນວນໃດໜຶ່ງ, ພາຍໃນ 30 ວັນ ມູນນິທິຕ້ອງລາຍງານ ແລະ ສະເໜີຕໍ່ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງ ເພື່ອຊາບ ແລະ ພິຈາລະນາຮັບຮອງເອົາຄະນະບໍລິຫານງານຊຸດໃໝ່.
- ພາຍຫລັງໄດ້ຮັບບົດລາຍງານ ແລະ ເອກະສານສະເໜີຂໍຮັບຮອງເອົາຄະນະບໍລິຫານງານຊຸດໃໝ່ແລ້ວ, ອົງການທີ່ມີສິດອະນຸມັດສ້າງຕັ້ງຕ້ອງພິຈາລະນາຮັບຮອງເອົາ ຫລື ປະຕິເສດບໍ່ຮັບຮອງເອົາຢ່າງຊ້າບໍ່ເກີນ 30 ວັນ.
- ກໍລະນີຕຳແໜ່ງໃດໜຶ່ງ ຂອງຄະນະບໍລິຫານງານມູນນິທິຫວ່າງລົງກ່ອນຄົບວາລະ, ໃຫ້ມູນນິທິຄັດເລືອກຜູ້ມາແທນພາຍໃນ 30 ວັນ ຫລັງຈາກນັ້ນລາຍງານ ແລະ ສະເໜີອົງການທີ່ມີສິດອະນຸມັດສ້າງຕັ້ງເພື່ອຊາບ ແລະ ພິຈາລະນາຮັບຮອງເອົາ ຫລື ປະຕິເສດຮັບຮອງເອົາຄະນະບໍລິຫານງານຜູ້ໃໝ່ທີ່ມາແທນ ຢ່າງຊ້າບໍ່ເກີນ 30 ວັນ.

- ເມື່ອມີການຍົກຍ້າຍ ຫຼື ປ່ຽນແປງທີ່ຕັ້ງສຳນັກງານບ່ອນເຮັດວຽກຂອງມູນນິທິ ໃຫ້ມູນນິທິລາຍງານຕໍ່ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງຊາບ ພາຍໃນ 30 ວັນ ນັບແຕ່ວັນຍົກຍ້າຍສະຖານທີ່.

## IX. ກ່ຽວກັບການພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຂອງມູນນິທິ

ມູນນິທິ ສາມາດພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນໄດ້ບົນພື້ນຖານລະບຽບການ ທີ່ລັດຖະບານ, ກະຊວງການຕ່າງປະເທດວາງອອກ.

ສຳລັບການພົວພັນເພື່ອຮັບທຶນຊ່ວຍເຫລືອຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ ທີ່ມີມູນຄ່າແຕ່ໜຶ່ງຮ້ອຍລ້ານກີບຂຶ້ນເມືອ ຕ້ອງຜ່ານການຢັ້ງຢືນສະຖານະພາບຂອງມູນນິທິ ຈາກອົງການຈັດຕັ້ງລັດ ທີ່ມີສິດອະນຸມັດສ້າງຕັ້ງກ່ອນ ແລ້ວຈຶ່ງສະເໜີກະຊວງການຕ່າງປະເທດ ຫລື ພະແນກພົວພັນຕ່າງປະເທດຂັ້ນແຂວງພິຈາລະນາ.

## X. ກ່ຽວກັບການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ

ການປະຕິບັດນະໂຍບາຍຕໍ່ມູນນິທິ ຫລື ບຸກຄົນຂອງມູນນິທິ ( ເອີ້ນລວມວ່າ ມູນນິທິ) ທີ່ມີຜົນງານດີເດັ່ນ ທີ່ກຳນົດໃນມາດຕາ 46 ຂອງດຳລັດລາຍລະອຽດປະຕິບັດດັ່ງນີ້:

- ມູນນິທິໃດທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນສ້າງຄຸນປະໂຫຍດ ແລະ ຄຸນງາມຄວາມດີໃຫ້ແກ່ສັງຄົມ ແລະ ປະເທດຊາດ ຈະໄດ້ຮັບຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ ແລະ ໃບຊົມເຊີຍ ລະດັບຕ່າງໆຢ່າງເໝາະສົມ.
- ມູນນິທິທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ ແມ່ນກະຊວງພາຍໃນ ເປັນຜູ້ພິຈາລະນາໃຫ້ການຍ້ອງຍໍ ຫລື ສະເໜີຂັ້ນເທິງໃຫ້ການຍ້ອງຍໍຕາມແຕ່ລະປະເພດ ແລະ ຕາມຄວາມເໝາະສົມ.
- ມູນນິທິທີ່ເຄື່ອນໄຫວໃນຂອບເຂດພາຍໃນແຂວງ, ນະຄອນຫລວງ ແມ່ນພະແນກພາຍໃນແຂວງ, ນະຄອນຫລວງ ເປັນຜູ້ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນໃຫ້ການຍ້ອງຍໍ ຫລື ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ສະເໜີຂັ້ນເທິງໃຫ້ການຍ້ອງຍໍຕາມແຕ່ລະປະເພດ ແລະ ຕາມຄວາມເໝາະສົມ.

## XI. ຮູບການລະເມີດ ແລະ ມາດຕະການ

ການປະພຶດ ຫລື ການເຄື່ອນໄຫວດັ່ງລຸ່ມນີ້ ແມ່ນການລະເມີດຕາມທີ່ກຳນົດໃນມາດຕາ 47 ຂອງດຳລັດ ແລະ ມີມາດຕະການຕ່າງໆຕໍ່ແຕ່ລະການລະເມີດຄື:

1. ຮອດກຳນົດເວລາແລ້ວ, ແຕ່ມີເຈດຕະນາບໍ່ສົ່ງບົດລາຍງານປະຈຳປີ ກ່ຽວກັບການເຄື່ອນໄຫວວຽກງານ ແລະ ບົດລາຍງານປະຈຳປີດ້ານການເງິນ ໃຫ້ອົງການທີ່ກ່ຽວຂ້ອງ. ການລະເມີດຄັ້ງທີ I ຈະຖືກກ່າວເຕືອນສຶກສາອົບຮົມ, ຄັ້ງທີ II ຕິດຕໍ່ກັນ ຈະຖືກສັ່ງໃຫ້ຍຸບເລີກ;
2. ຍົກຍ້າຍສະຖານທີ່ສຳນັກງານຂອງມູນນິທິໄປຢູ່ແຫ່ງໃໝ່, ແຕ່ມີເຈດຕະນາບໍ່ແຈ້ງໃຫ້ອົງການທີ່ກ່ຽວຂ້ອງຊາບຕາມກຳນົດເວລາ. ການລະເມີດຄັ້ງທີ I ຈະຖືກກ່າວເຕືອນສຶກສາອົບຮົມ, ຄັ້ງທີ II ຕິດຕໍ່ກັນຈະຖືກສັ່ງໂຈະການເຄື່ອນໄຫວຊົ່ວຄາວ, ກໍລະນີສືບຕໍ່ລະເມີດ

ອີກ ແລະ ມີເຈດຕະນາເພື່ອຫລີກລ້ຽງບໍ່ຢາກໃຫ້ອົງການຈັດຕັ້ງລັດຮູ້ທີ່ຢູ່ທີ່ແນ່ນອນ ຈະຖືກສັ່ງໃຫ້ຍຸບເລີກ;

3. ໃຊ້ຈ່າຍເງິນບໍລິຫານເກີນ 10% ຂອງແຜນການລາຍຈ່າຍປະຈຳປີ. ລະເມີດຄັ້ງທີ I ຈະຖືກກ່າວເຕືອນສຶກສາອົບຮົມ, ລະເມີດຄັ້ງທີ II ຕິດຕໍ່ກັນຈະຖືກສັ່ງໂຈະການເຄື່ອນໄຫວຊົ່ວຄາວ, ກໍລະນີມີເຈດຕະນາສືບຕໍ່ລະເມີດຈະຖືກສັ່ງໃຫ້ຍຸບເລີກ;
4. ໃຊ້ຈ່າຍເງິນຊ່ວຍເຫລືອ, ເງິນບໍລິຈາກທີ່ປຸກລະດົມຂົນຂວາຍມາໄດ້ ໂດຍບໍ່ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍທີ່ກຳນົດໄວ້ໃນກົດລະບຽບຂອງມູນນິທິ. ລະເມີດຄັ້ງທີ I ຈະຖືກກ່າວເຕືອນສຶກສາອົບຮົມ, ລະເມີດຄັ້ງທີ II ຕິດຕໍ່ກັນຈະຖືກສັ່ງໂຈະການເຄື່ອນໄຫວຊົ່ວຄາວ, ກໍລະນີມີເຈດຕະນາສືບຕໍ່ລະເມີດຈະຖືກສັ່ງໃຫ້ຍຸບເລີກ;
5. ເຄື່ອນໄຫວເກີນຂອບເຂດ ແລະ ຂົງເຂດທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ ພາໃຫ້ມີຄວາມເສຍຫາຍໃຫ້ແກ່ສັງຄົມ. ລະເມີດຄັ້ງທີ I ຈະຖືກກ່າວເຕືອນ ສຶກສາອົບຮົມ, ລະເມີດ ຄັ້ງທີ II ຕິດຕໍ່ກັນຈະຖືກສັ່ງໂຈະການເຄື່ອນໄຫວຊົ່ວຄາວ, ກໍລະນີມີເຈດຕະນາສືບຕໍ່ລະເມີດຈະຖືກສັ່ງໃຫ້ຍຸບເລີກ;
6. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງດຳລັດວ່າດ້ວຍມູນນິທິ ແລະ ລະບຽບກົດໝາຍຂອງລັດ. ອີງໃສ່ສະຖານໜັກ ຫລື ເບົາຂອງການລະເມີດຈະພິຈາລະນາມາດຕະການທີ່ເໝາະສົມ, ລະເມີດຄັ້ງທີ I ຈະຖືກກ່າວເຕືອນ, ສຶກສາອົບຮົມ ຫລື ໃຫ້ຢຸດຕິການເຄື່ອນໄຫວຊົ່ວຄາວ. ລະເມີດຄັ້ງທີ I ແຕ່ກໍ່ໃຫ້ເກີດມີຜົນເສຍຫາຍໃຫຍ່ຫລວງຕໍ່ສັງຄົມ ແລະ ປະເທດຊາດ ນອກຈາກຈະຖືກດຳເນີນຄະດີຕາມລະບຽບກົດໝາຍແລ້ວ, ຍັງຈະຖືກສັ່ງໃຫ້ຍຸບເລີກມູນນິທິຕື່ມອີກ.

ກະຊວງພາຍໃນ ສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງເປັນຜູ້ພິຈາລະນາ ແລະ ປະຕິບັດມາດຕະການ ຕໍ່ມູນນິທິທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ.

ອົງການປົກຄອງແຂວງ, ນະຄອນຫລວງ ສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາ ແລະ ປະຕິບັດມາດຕະການຕໍ່ມູນນິທິ ທີ່ເຄື່ອນໄຫວໃນຂອບເຂດພາຍໃນແຂວງ, ນະຄອນຫລວງ, ເມືອງ ແລະ ເທດສະບານ.

ມູນນິທິ ທີ່ຖືກສັ່ງໂຈະ ຫຼື ຢຸດຕິການເຄື່ອນໄຫວຊົ່ວຄາວ, ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງ ຈະໄດ້ຖອດຖອນຂໍ້ຕົກລົງອະນຸມັດສ້າງຕັ້ງ, ຕາປະທັບພ້ອມທະບຽນນຳໃຊ້ຕາປະທັບຂອງມູນນິທິຄືນຈົນ ກວ່າມູນນິທິຈະມີການປັບປຸງ ແລະ ແກ້ໄຂໃຫ້ຖືກຕ້ອງສາກ່ອນ ແລ້ວຈຶ່ງສົ່ງຄືນໃຫ້.

ມູນນິທິ ທີ່ຖືກສັ່ງໃຫ້ຍຸບເລີກ, ອົງການຈັດຕັ້ງລັດທີ່ມີສິດອະນຸມັດສ້າງຕັ້ງ ຈະໄດ້ຖອດຖອນຂໍ້ຕົກລົງອະນຸມັດສ້າງຕັ້ງ, ຕາປະທັບ ພ້ອມທະບຽນນຳໃຊ້ຕາປະທັບຂອງມູນນິທິຄືນຢ່າງຖາວອນ.

## XII. ກ່ຽວກັບການຂໍອະນຸມັດສ້າງຕັ້ງມູນນິທິຄືນໃໝ່

ການຂໍອະນຸມັດສ້າງຕັ້ງມູນນິທິຄືນໃໝ່ ຕາມທີ່ກຳນົດໃນມາດຕາ 49 ວັກສອງຂອງດຳລັດແມ່ນປະຕິບັດດັ່ງນີ້:

ມູນນິທິໃດທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011 ໃຫ້ປະກອບສຳນວນເອກະສານຄົບຖ້ວນ ຕາມທີ່ກຳນົດໃນ

ມາດຕາ 13 ຂອງດຳລັດ ແລະ ເອກະສານອື່ນອີກທີ່ເຫັນວ່າມີຄວາມຈຳເປັນເຊັ່ນ: ຂໍ້ຕົກລົງອະນຸມັດສ້າງຕັ້ງມູນນິທິ; ຂໍ້ຕົກລົງ ຫຼື ມະຕິແຕ່ງຕັ້ງຄະນະບໍລິຫານງານ, ປະທານ, ຮອງປະທານ, ຄະນະກວດກາ, ເລຂາທິການມູນນິທິ ແລະ ກົດລະບຽບຂອງມູນນິທິສະບັບທີ່ຍັງນຳໃຊ້ຢູ່ ຫລັງຈາກນັ້ນສົ່ງໃຫ້ອົງການທີ່ມີສິດອະນຸມັດສ້າງຕັ້ງ ເພື່ອພິຈາລະນາ ພາຍໃນກຳນົດ 60 ວັນ ນັບແຕ່ວັນທີ 20 ສິງຫາ 2011. ເກີນກຳນົດເວລາດັ່ງກ່າວ ມູນນິທິໃດບໍ່ໄດ້ຈົດທະບຽນສ້າງຕັ້ງຄືນໃໝ່ແມ່ນເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

## XIII. ການຈັດຕັ້ງປະຕິບັດຄຳແນະນຳ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ຜ່ານການຈັດຕັ້ງປະຕິບັດຕົວຈິງ ມີຈຸດໃດຍັງບໍ່ຈະແຈ້ງ, ຍັງມີຄວາມເຂົ້າໃຈຍາກ, ການປະຕິບັດຂາດຄວາມເປັນເອກະພາບກັນ ແລະ ອື່ນໆ ກະລຸນາສົ່ງຄຳເຫັນສ່ອງແສງມາຍັງກະຊວງພາຍໃນ ເພື່ອພິຈາລະນາແກ້ໄຂໃຫ້ທ່ວງທັນຕາມສະພາບການ.

ລັດຖະມົນຕີວ່າການກະຊວງພາຍໃນ

ຄຳປານ ພິລາວົງ